**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ

ກອງປະຊຸມຮ່ວມ ລະຫວ່າງ ຄະນະກຳມະການບໍລິຫານງານກອງທຶນໂລກ (Ex-Com), ຄະນະກຳມະການຕິດຕາມກວດກາ (OC) ແລະ ຄະນະກຳມະການຂົນຂວາຍແຫຼ່ງທຶນ (RMC) ໄດ້ຈັດຂຶ້ນ ເພື່ອສົນທະນາປຶກສາຫາລື ແລະ ຕົກລົງເປັນເອກະພາບກັນພາຍໃນຄະນະກຳມະການ ແລະ ພາກສ່ວນກ່ຽວຂ້ອງທີ່ສຳຄັນກ່ຽວກັບກອບແນວຄວາມຄິດ ແລະ ກຳນົດເວລາສຳລັບຂັ້ນຕອນກ່ຽວກັບການຈັດວາງທີ່ຕັ້ງ ແລະ ໂຄງສ້າງຂອງຄະນະກຳມະການປະສານງານກອງທຶນໂລກ (CCM). ກອງປະຊຸມດັ່ງກ່າວໄດ້ຈັດຂຶ້ນໂດຍການເປັນປະທານຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ, ປະທານອົງການກາແດງລາວ ທັງເປັນປະທານຄະນະກຳມະການ (CCM).

I. **ວັນເວລາ:** ວັນສຸກ, ທີ 06 ສິງຫາ 2021, ເວລາ 13:30 ເຖິງ 16:30.

II. **ສະຖານທີ່:** ຫ້ອງປະຊຸມທີ່ຊັ້ນ 1, ກອງເລຂາ CCM ຂ້າງວັດສີເມືອງ.

III. **ຜູ້ເຂົ້າຮ່ວມ:**

1. ຄະນະກຳມະການບໍລິຫານງານກອງທຶນໂລກ ຈຳນວນ 02 ທ່ານ;
2. ຄະນະກຳມະການຕິດຕາມກວດກາ ຈຳນວນ 05 ທ່ານ;
3. ຄະນະກຳມະການຂົນຂວາຍແຫຼ່ງທຶນ ຈຳນວນ 02 ທ່ານ;
4. ຜູ້ຕາງໜ້າຈາກສູນຕ້ານເອດ ແລະ ພຕພ, ສູນວັນນະໂລກ, ສູນໄຂ້ຍຸງ ແມ່ກາຝາກ ແລະ ແມງໄມ້, ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທາງສັງຄົມ ລວມທັງກອງເລຂາ CCM ຈຳນວນ 09 ທ່ານ ແລະ
5. ພາກສ່ວນຕ່າງໆທີ່ເຂົ້າຮ່ວມຜ່ານທາງອອນລາຍອີກຈຳນວນ 17 ທ່ານ;
   ລວມທັງໝົດ 35 ທ່ານ.

IV. **ວາລະກອງປະຊຸມ:**

1. ກອບແນວຄວາມຄິດ ແລະ ກຳນົດເວລາສຳລັບຂັ້ນຕອນກ່ຽວກັບການຈັດວາງທີ່ຕັ້ງ ແລະ ໂຄງສ້າງຂອງຄະນະກຳມະການປະສານງານກອງທຶນໂລກ (CCM).
2. ຜົນໄດ້ຮັບເບື້ອງຕົ້ນຈາກການທົບທວນຂໍ້ແນະນຳຂອງກອງທຶນໂລກແລະເອກະສານຕ່າງໆທີ່ກ່ຽວຂ້ອງກັບການຈັດວາງທີ່ຕັ້ງແລະໂຄງສ້າງຂອງຄະນະກຳມະການປະສານງານກອງທຶນໂລກ (CCM).

V. **ສະຫຼຸບສັງລວມເນື້ອໃນໂດຍຫຍໍ້ຂອງກອງປະຊຸມ:**

ກອງເລຂາ CCM ໄດ້ລາຍງານໂດຍຫຍໍ້ກ່ຽວກັບປະຫວັດຄວາມເປັນມາ, ໜ້າທີ່ຮັບຜິດຊອບຫຼັກຂອງຂອບເຂດການຈັດຕັ້ງປະຕິບັດກິດຈະກຳ, ຜົນໄດ້ຮັບແລະຂອບເຂດບູລິມະສິດຂອງຂະບວນການວິວັດ CCM ຢູ່ໃນ ສປປ ລາວ.

ຫຼັງຈາກນັ້ນ, ກອງເລຂາ CCM ໄດ້ແນະນຳ ແລະ ມອບໃຫ້ ທ່ານ ດຣ. ນາງ ຈັນດາວອນ ໂພໄຊ, ເຊິ່ງເປັນທີ່ປຶກສາເພື່ອຊ່ວຍ CCM ໃນຂະບວນການຈັດວາງທີ່ຕັ້ງ ແລະ ໂຄງສ້າງຂອງຄະນະກຳມະການ (CCM), ເພື່ອນຳສະເໜີກອບແນວຄວາມຄິດ ແລະ ກຳນົດເວລາສຳລັບຂັ້ນຕອນກ່ຽວກັບການຈັດວາງທີ່ຕັ້ງ ແລະ ໂຄງສ້າງຂອງຄະນະກຳມະການ (CCM) ແລະ ຜົນໄດ້ຮັບເບື້ອງຕົ້ນຈາກການທົບທວນຂໍ້ແນະນຳຂອງກອງທຶນໂລກ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງກັບການຈັດວາງທີ່ຕັ້ງ ແລະ ໂຄງສ້າງຂອງຄະນະກຳມະການ (CCM). ຜ່ານການຮັບຟັງບົດສະເໜີ ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ປຶກສາຫາລືກັນຫຼາຍບັນຫາ ເຊິ່ງໄດ້ສັງລວມຄຳເຫັນສຳຄັນດັ່ງນີ້:

- ອີງຕາມລາຍຊື່ຂອງຄະນະກຳມະການດ້ານສາທາລະນະສຸກທີ່ມີຢູ່ແລ້ວປະກອບມີ 17 ຄະນະກຳມະການໃນແຜນອາດ, ຜູ້ຕາງໜ້າຈາກສູນໄຂ້ຍຸງ (CMPE) ໄດ້ສະເໜີໃຫ້ເພີ່ມຄະນະກຳມະການອີກ 1 ຄະນະສຳລັບແຜນງານໄຂ້ຍຸງແຫ່ງຊາດ;
- ຄວາມຂັດແຍ້ງດ້ານຜົນປະໂຫຍດ ແລະ ການມີສ່ວນຮ່ວມຂອງຫຼາຍຂະແໜງການ, ລວມທັງອົງການ NGO, CSOs ແລະ ປະຊາກອນຫຼັກ ແມ່ນຫຼັກການທີ່ສຳຄັນຂອງກອງທຶນໂລກ. ຖ້າເອົາ CCM ລວມເຂົ້າໃນຄະນະກຳມະການທີ່ມີຢູ່ແລ້ວຂອງກະຊວງສາທາລະນະສຸກ, ຄະນະກຳມະການໃດຈະເໝາະສົມທີ່ສຸດ? ຈະມີວິທີການແກ້ໄຂຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດແນວໃດ? NGO ແລະ CSOs ຈະມີສ່ວນຮ່ວມໃນໂຄງຮ່າງການຈັດຕັ້ງໃໝ່ຄືແນວໃດ? ກ່ຽວກັບຄວາມຂັດແຍ້ງດ້ານຜົນປະໂຫຍດ, ຜູ້ເຂົ້າຮ່ວມບາງທ່ານກໍ່ໄດ້ໃຫ້ຂໍ້ສັງເກດ ເຫັນວ່າກອງທຶນໂລກມີຄວາມຍືດຍຸ່ນໃນລະດັບໃດໜຶ່ງໃນປີທີ່ຜ່ານມາໂດຍການອະນຸຍາດໃຫ້ຜູ້ຕາງໜ້າຈາກກະຊວງສາທາລະນະສຸກ (PR) ໄດ້ຮັບການສະເໜີຊື່ແລະເລືອກຕັ້ງເປັນປະທານ CCM ເຊິ່ງໄດ້ສະແດງໃຫ້ເຫັນເຖິງຄວາມເປັນຜູ້ນຳ ແລະ ຄວາມເປັນເຈົ້າຕົນເອງຂອງລັດຖະບານໃນການຄຸ້ມຄອງທຶນຢ່າງມີປະສິດທິພາບ;
- ຄະນະກຳມະການໂຄງການ HANSA (ທາງເລືອກທີ່ 2) ແລະ ຄະນະກຳມະການດ້ານວິຊາການສຳລັບ PCRCM COVID -19 (ທາງເລືອກທີ່ 3) ແມ່ນຄະນະກຳມະການສະເພາະກິດ ແລະ ໄດ້ຖືກສ້າງຕັ້ງຂຶ້ນສຳລັບໂຄງການ ແລະ ໜ້າວຽກສະເພາະ. ຄະນະຊີ້ນຳໂຄງການ HANSA ໄດ້ສ້າງຕັ້ງຂຶ້ນເພື່ອການຮ່ວມມືລະຫວ່າງຜູ້ໃຫ້ທຶນ, ພາກສ່ວນລັດຖະບານ ແລະ ຄູ່ຮ່ວມງານ ເພື່ອຈັດຕັ້ງປະຕິບັດແຜນງານດ້ານສຸຂະພາບ, ລວມມີແຜນງານຕ້ານເອດ ແລະ ວັນນະໂລກ ແຕ່ບໍ່ລວມແຜນງານຄວບຄຸມພະຍາດໄຂ້ຍຸງ. ຄະນະກຳມະການດັ່ງກ່າວອາດຈະຈົບລົງ ຖ້າບໍ່ມີແຫຼ່ງທຶນສະໜັບສະໜູນຕື່ມ. ຄະນະກຳມະການດ້ານວິຊາການສຳລັບ PCRCM COVID -19 ໄດ້ສ້າງຕັ້ງຂຶ້ນສະເພາະສຳລັບການຄຸ້ມຄອງ ແລະ ຄວບຄຸມການລະບາດຂອງພະຍາດ COVID -19 ແລະ ບໍ່ແນ່ໃຈວ່າກອງທຶນໂລກຈະສືບຕໍ່ການສະໜອງທຶນນີ້ດົນປານໃດ ເນື່ອງຈາກສະຖານະການການລະບາດຂອງ COVID -19 ອາດຈະມີການປ່ຽນແປງ;
- ເພື່ອສົ່ງເສີມຄວາມເປັນເຈົ້າການ, ຄວາມຍືນຍົງ, ຍຸດທະສາດຂອງການປະຕິຮູບຂະແໜງສາທາລະນະສຸກ ແລະ ແຜນງານແຫ່ງຊາດສຳລັບວຽກງານຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ, ກອງປະຊຸມໄດ້ເຫັນດີທີ່ຈະລວມ CCM ເຂົ້າໃນ ຄະນະກຳມະການປະສານງານຂະແໜງສາທາລະນະສຸກ, ການປະຕິຮູບຂະແໜງສາທາລະນະສຸກ ແລະ ສາມສ້າງ, ເຊິ່ງຄະນະກຳມະການດັ່ງກ່າວແມ່ນມີໂຄງສ້າງທີ່ເຂັ້ມແຂງ ແລະ ລວມມີທຸກແຜນງານຂອງການປະຕິຮູບຂະແໜງສາທາລະນະສຸກ. ໃນໂຄງຮ່າງການບໍລິຫານຄຸ້ມຄອງ ແມ່ນມີທ່ານລັດຖະມົນຕີກະຊວງສາທາລະນະສຸກເປັນປະທານ ແລະ ຄູ່ຮ່ວມພັດທະນາ (ຜູ້ຕາງໜ້າ WHO ແລະ ເອກອັກຄະລັດຖະທູດຍີ່ປຸ່ນ) ເປັນປະທານຮ່ວມ. ຢູ່ໃນຂັ້ນຕອນປັດຈຸບັນ, ຕົວແທນຂອງ CSOs ໄດ້ເຂົ້າຮ່ວມຢູ່ໃນລະດັບນະໂຍບາຍຂອງຄະນະກຳມະການໃນຖານະເປັນຜູ້ສັງເກດການ ແຕ່ລະດັບຂອງການມີສ່ວນຮ່ວມຂອງ CSOs ສາມາດປຶກສາຫາລືກັນໄດ້ຕາມພາຍຫຼັງ;
- ເຖິງຢ່າງໃດກໍ່ຕາມ, ຜູ້ເຂົ້າຮ່ວມສັງເກດເຫັນວ່າໂຄງສ້າງ ແລະ ການດຳເນີນງານຂອງ ຄະນະກຳມະການປະສານງານຂະແໜງສາທາລະນະສຸກ, ການປະຕິຮູບຂະແໜງສາທາລະນະສຸກ ແລະ ສາມສ້າງຍັງບໍ່ທັນສົມບູນຕາມແຜນການ, ສະນັ້ນກະຊວງສາທາລະນະສຸກ ຄວນໄດ້ຮັບການສະໜັບສະໜູນເພື່ອປັບປຸງການຈັດຕັ້ງ ແລະ ການດຳເນີນງານຂອງຄະນະກຳມະການນີ້. ນອກຈາກນັ້ນ, ຄະນະກຳມະການນີ້ຄວນຈັດການຂໍ້ຂັດແຍ້ງດ້ານຜົນປະໂຫຍດໃຫ້

ສອດຄ່ອງກັບນະໂຍບາຍຂອງກອງທຶນໂລກ ແລະ ອຳນວຍຄວາມສະດວກໃຫ້ແກ່ການມີສ່ວນຮ່ວມຂອງ CSOs ເທົ່າທີ່ເປັນໄປໄດ້. WHO ຈະສືບຕໍ່ປຶກສາຫາລືກັບຄະນະລັດຖະມົນຕີກະຊວງສາທາລະນະສຸກ ແລະ ກົມແຜນການ ແລະ ຮ່ວມມື (DPC) ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກຳມະການນີ້ ແລະ ຈະແຈ້ງຄວາມຄືບໜ້າໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຮູ້ນຳຕາມພາຍຫຼັງ.

ກ່ອນຈະປິດກອງປະຊຸມ ໄດ້ເຫັນດີເປັນເອກະພາບກັນສະລຸບດັ່ງນີ້:

- ທີ່ປຶກສາຈະຕ້ອງເຮັດບົດສະຫຼຸບ ແລະ ລາຍງານລາຍລະອຽດຂອງການສ້າງແຜນອາດ ແລະ ທາງເລືອກສຳລັບການຈັດວາງທີ່ຕັ້ງ ແລະ ໂຄງສ້າງ ແລະ ການປ່ຽນຖ່າຍຂອງ CCM;
- ກອງເລຂາ CCM ຈະສືບຕໍ່ຊ່ວຍ ແລະ ອຳນວຍຄວາມສະດວກຕໍ່ວຽກງານຂອງທີ່ປຶກສາເພື່ອເຮັດໃຫ້ວຽກງານສຳເລັດ;
- WHO ຈະຊ່ວຍ MOH ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ ຄະນະກຳມະການປະສານງານຂະແໜງສາທາລະນະສຸກ, ການປະຕິຮູບຂະແໜງສາທາລະນະສຸກ ແລະ ສາມສ້າງ;
- ສຸດທ້າຍ, ກອງເລຂາ CCM ໄດ້ແຈ້ງຕໍ່ກອງປະຊຸມວ່າກອງທຶນໂລກໄດ້ອະນຸມັດເງິນທຶນເພີ່ມເຕີມທັງໝົດ 7,130,717 ໂດລາສະຫະລັດໃຫ້ ສປປ ລາວ ເພື່ອສະໜັບສະໜູນການຕອບໂຕ້ຕໍ່ພະຍາດ Covid19 ແຫ່ງຊາດ. ທີມງານກອງທຶນໂລກໄດ້ສະເໜີຈັດກອງປະຊຸມຮ່ວມທາງໄກເພື່ອສົນທະນາກັບ PR ແລະ ສະມາຊິກ CCM /ຄູ່ຮ່ວມມື/SRs ທີ່ກ່ຽວຂ້ອງ ໃນວັນພຸດວັນທີ 18 ສິງຫາ ເວລາ 14: 30-15: 30 ໂມງແລງ (ເວລາໃນວຽງຈັນ).

ກອງປະຊຸມໄດ້ດຳເນີນ 03:15 ຊົ່ວໂມງ ແລະ ໄດ້ສິ້ນສຸດລົງໃນເວລາ 16:45 ຂອງວັນທີ 06 ສິງຫາ 2020.

ນະຄອນຫຼວງວຽງຈັນ, ວັນທີ 17/08/2021

| ປະທານກອງປະຊຸມ | ຜູ້ສັງລວມເນື້ອໃນກອງປະຊຸມ |
|---|---|
| ທ່ານ ຮສ. ດຣ. ພູທອນ ເມືອງປາກ | ທ່ານ ບຸດສາລີ ລັດຕະນະ |
| ປະທານອົງການກາແດງລາວ, | ຜູ້ປະສານງານ ແລະ ການເງິນ |
| ປະທານຄະນະກຳມະການປະສານງານກອງທຶນໂລກ | ກອງເລຂາຄະນະກຳມະການປະສານງານກອງທຶນໂລກ |

(CROIX-ROUGE LAO)